# ກ່ຳພ້າກັບພີນ້ອຍ

## ພາກສອງ



ອຸທົນ ບຸນຍາວົງ

ນິທານ ທ້າວກ່ຳພ້າ ແລະ ຜີນ້ອຍ

ພາກສອງ

---

# ກ່ຳພ້າກັບສ່ຽວ

ຂຽນເລື່ອງໂດຍ: ດວງເດືອນ ບຸນຍາວົງ
ແຕ້ມຮູບປະກອບໂດຍ: ສ. ສະໄຫວ

---

ຈັດພິມໂດຍ ກົມສາມັນສຶກສາ ກະຊວງສຶກສາແລະ ກິລາ.

ອຸປະຖຳໂດຍ
ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວທີ່ໂຕກຽວ

1990



ສອງຜົວເມຍ ກ່ຳພ້າກັບນາງງາ ຢູ່ຮ່ວມກັນທີ່ເຮືອນໃຫຍ່ປາຍທົ່ງ ຢ່າງມີຄວາມສຸກ. ຕົ້ນໄມ້ອ້ອມເຮືອນອອກໝາກດົກໝາ ມີໝູ່ນົກກາມາຕອດສັບກິນ ທັງຮ້ອງແຊວໆ ຕະຫຼອດເວລາ

ໄທບ້ານຫຼາຍຄົນ ໂຈດຂານ ຖາມຫາກ່ຳພ້າ ເພາະບໍ່ເຫັນມາ ເລາະຂໍເຂົ້າກິນ. ຕາພໍ່ບ້ານສັ່ງຂ້ອຍນາ ສອງສາມຄົນອອກໄປເບິ່ງທົ່ງນາ ແຄມປ່າບ່ອນເຂັດຂວາງ.





ບ່າວບາພໍ່ບ້ານສາມຄົນ ຍ່າງລັດທົ່ງ ມຸ່ງໜ້າໄປຍັງດົງ
ເຊັດຂວາງ ບ່ອນຜີບໍ່ທ່ອງຄົນບໍ່ຫຽວ. ມາຮອດເຂດທົ່ງ
ນາຂອງກ່ຳພ້າພວກເຂົາ ກໍ່ຫອມກິ່ນແປກປະຫຼາດ.

ຜູ້ໜຶ່ງເວົ້າຂຶ້ນວ່າ: ໂອ໋ ນີ້ກິ່ນຫອມດອກໄມ້ວິເສດ !

ຜູ້ທີສອງເວົ້າວ່າ: ບໍ່ແມ່ນ, ຫອມໝາກນີ້

ຜູ້ທີສາມເວົ້າວ່າ: ຢ່າຖຽງກັນ ໄປເບິ່ງໃກ້ໆ ດີກວ່າ.





ພວມຖຽງກັນໄປມາ ຢູ່ນັ້ນ ພວກເຂົາກໍ່ໄດ້ຍິນສຽງແຄນ ດັງອ້ອຍອິ່ນອອກມາ. ຊາຍທັງສາມ ແລ່ນລົ້ມພຸ່ບລົ້ມຟາບຈ່ອງກັນໄປ ເບິ່ງໃກ້ໆ ພຸ່ມໄມ້ແຄມຮົ້ວອ້ອມເຮືອນ ຫຼັງງາມຂອງກ່ຳພ້າ.

ຈອບຢູ່ບໍ່ດົນ ພວກເຂົາເຫັນຍິງຊາຍຄູ່ໜຶ່ງຍ່າງລົງ ຂັ້ນ ໄດເຮືອນມາຍັງສວນ. ພວກເຂົາຕົກສະເງີ້ເກົ້າເບິ່ງ ເພາະນາງຄົນນັ້ນງາມກວ່າແມ່ຍິງທັງໝົດ ທີ່ພວກເຂົາ ເຄີຍເຫັນມາ ແລະ ແຮ່ງຕົກໃຈຫຼາຍຂຶ້ນ ເມື່ອຈື່ວ່າ ຜູ້ຊາຍຜູ້ນັ້ນແມ່ນກ່ຳພ້າ.





ຊາຍທັງສາມຟ້າວກັບມາບອກເລົ່າໃຫ້ຕາພໍ່ບ້ານຟັງ ຄົນໜຶ່ງວ່າ: ຕ້ອງເປັນເມຍບັກກ່ຳພ້າຄັກໆ ຕວ່າ ຄົນທີ່ສອງວ່າ: ເກີດມາຍັງບໍ່ເຫັນໃຜງາມປານນີ້. ຄົນທີ່ສາມຕື່ມວ່າ: ສົມໄປເປັນມະເຫສີ ທ້າວພະຍາ ພຸ້ນແລ້ວ

ຕາພໍ່ບ້ານຟັງແລ້ວບໍ່ເຊື່ອ: ເຮັດໃດບັກກ່ຳພ້າ ຂີ້ທຸກ ຈິ່ງຈະມີເມຍງາມ ຢູ່ເຮືອນຫຼັງໃຫຍ່ກວ່າເຮົາ? ຊິໄປເບິ່ງເອງກ່ອນ! ເມື່ອຕາພໍ່ບ້ານອອກໄປເບິ່ງກໍ່ເຫັນວ່າແມ່ນຄວາມຈິງແທ້





ມື້ໜຶ່ງ ສ່ຽວຕາພໍ່ບ້ານ ແຕ່ໃນເມືອງມາແວ່ຢາມບອກ ຂ່າວວ່າ ພະຍາເມືອງ ຈະໃຫ້ເງິນຄຳ ເປັນຣາງວັນ ແກ່ ຜູ້ເອົາແມ່ຍິງງາມ ໄປຖວາຍເປັນນາງສະໜົມຂອງເພິ່ນ.

ຕາພໍ່ບ້ານໄດ້ຟັ່ງ ກໍ່ຄຶດຢາກໄດ້ຣາງວັນ ຈຶ່ງເດີນທາງເຂົ້າໄປໃນເມືອງ ເລົ່າເລື່ອງຄວາມງາມ ຂອງ ນາງງາໃຫ້ພະຍາຟັ່ງ.





ພະຍາເອີ້ນເສນາອາມາດ ມາເປີກສາຫາລື ວ່າຈະຊ່ວງຊີງເອົານາງງາມາເປັນເມຍໄດ້ແນວໃດ ໃນທີ່ສຸດກໍ່ຕົກລົງວ່າ ໃຫ້ກ່ຳພ້າມາພະນັນ ເສັງ ກັບພະຍາ ຖ້າກ່ຳພ້າ ເສຍພະນັນ ທ້າວຕ້ອງຍົກນາງງາໃຫ້ ແລະ ກົງກັນຂ້າມ ຖ້າພະຍາເສຍພະນັນ ພະຍາຈະມອບບ້ານເວນເມືອງໃຫ້ກ່ຳພ້າ.

ທຳອິດ ພະຍາຫ້າໃຫ້ກ່ຳພ້າເອົາໄກ່ມາຕີ ນາງງາ ໃຊ້ແຫວນທຳມະລິງ ວິງວິເສດ ເສກ ເຫງັບມອມ ສ່ຽວຂອງກ່ຳພ້າ ໃຫ້ເປັ່ນໄກ່ຕີຕົວລາຍນ້ອຍ.





ເຫັນໄກ່ຂອງທ້າວກ່ຳພ້າ ໂດດຄຸບຄໍໄກ່ຕີ ຂອງພະຍາພາຍໃນພິບຕາດຽວ. ພະຍາເສຍໜ້າຈຶ່ງທ້າຊົນຄວາຍ ແຕ່ກໍ່ບໍ່ແພ້ຄວາຍກ່ຳພ້າ ເຊິ່ງເສືອສ່ຽວກ່ຳພ້າປອມໂຕມາ. ພະຍາທ້າກ່ຳພ້າຊົນສັດປະເພດຕ່າງໆ ແຕ່ກໍ່ບໍ່ແພ້ກ່ຳພ້າຈັກເທື່ອ.

ໃນທີ່ສຸດ ພະຍາກໍ່ທ້າຊ່ວງເຮືອ, ນາງງາ ໃຊ້ແຫວນວິເສດ ເສກພະຍານາກ ສ່ຽວກ່ຳພ້າ ໃຫ້ເປັນເຮືອຊ່ວງ ເມື່ອຊ່ວງໃກ້ຈະເຖິງຫຼັກໄຊ ນາກເຮືອກ່ຳພ້າກໍ່ເອົາຫາງຟາດນ້ຳເປັນຟອງຍວກແຮງ ຈົນເຮືອພະຍາຫຼົ້ມ ພະຍາກັບເສນາອາມາດໃນເຮືອຈົມນ້ຳຕາຍໝົດ.





ຫຼັງຈາກພະຍາຕາຍແລ້ວ ທ້າວກ່ຳພ້າຈຶ່ງກັບມາຢູ່ ກັບ ນາງງາທີ່ເຮືອນແຄມທົ່ງນາຂອງຕົນຕາມເດີມ.

ແຕ່ພະຍາເມືອງທີ່ຈົມນ້ຳຕາຍໄປນັ້ນ ຍັງອາຄາດ
ແຄ້ນ ກໍ່ພ້າບໍ່ແລ້ວ, ວິນຍານຂອງພະຍາເກີດເປັນແຖນ
ນ້ອຍ ຢູ່ເທິງຟ້າ ມີລິດເດດສົມຄວນ ແລະ ກໍ່ຍັງຢາກ
ໄດ້ ນາງງາ ບໍ່ເລີກແລ້ວ.





ພະຍາແຖນນ້ອຍ ປ່າວປະກາດວ່າ ໃຜສາມາດໄປເອົາ ວິນຍານນາງງາມາໄດ້ ຈະໃຫ້ຣາງວັນ, ອ້າຍແມງງອດແອວກົ່ວ ອ້າງວ່າຕົນມີພິດຮ້າຍຕອດຄົນຕາຍຈຶ່ງຂານອາສາກ່ອນໝູ່.

ໂຊກດີ ຜີນ້ອຍ ນ້ອງຮັກຂອງກ່ຳພ້າທີ່ໄດ້ມາເປັນ ຂ້ອຍປິດບ່ອນນອນໃຫ້ພະຍາແຖນ ຮູ້ເລື່ອງດັ່ງກ່າວຈຶ່ງ ຖາມແມງງອດວ່າ ມັນຈະເຮັດແນວໃດ ແມງງອດບອກ ວ່າ ຈະໄປນອນຂິດຢູ່ໃນດິ້ນພື້ນ ເມື່ອນາງງາມາເອົາພື້ນ ໄປດັງໄຟໜຶ້ງເຂົ້າໃນຕອນເຊົ້າມັນຈະຕອດນາງໂລດ.





ຜີນ້ອຍລົງມາບອກອ້າຍກ່ຳຟ້າ ໃຫ້ຮູ້ເລື່ອງທຸກຢ່າງ ດັ່ງນັ້ນ ທ້າວກ່ຳຟ້າ ຈຶ່ງລຸກໜຶ້ງເຂົ້າເອົາພື້ນເອງ ທ້າວເອົາກະບອງເຍື່ອງເບິ່ງ ເຫັນແມງງອດນອນຂົດຢູ່ໃນກາບໄມ້ແຫ້ງ ຈຶ່ງຂ້າເສຍ.

ພະຍາແຖນນ້ອຍ ສົ່ງງູເຫົ່າຫ້ອມລົງມາ ເພື່ອຕອດນາງງາ ແຕ່ກໍ່ຖືກກໍາພ້າຂ້າຕາຍເຊັ່ນກັນ ຍ້ອນຜີນ້ອຍລົງມາບອກທຸກໆ ເທື່ອ.





ໃນທີ່ສຸດ ກໍ່ແມ່ນໂຕບ່າງລີ້ວ ອາສາມາຮ້ອງກູກເອົາຂວັນບາງງາ ດ້ວຍລິດເດດໃນລີ້ນຂອງມັນ. ຜີນ້ອຍມາບອກອ້າຍກ່ຳພ້າບໍ່ໃຫ້ມ້ຽນຄາບບາງງາ, ຕົນຈະຫາທາງຊ່ວຍເຫຼືອ.

ຕົກກາງເດິກຂອງຄືນໜຶ່ງ ໂຕບ່າງລີ້ວ ກໍ່ມາຮ້ອງ ກູກຢູ່ຫົວເຮືອນ. ສຽງຂອງມັນດັງວີ່ວອນວ່າ : ມາເຍີ່ ນາງນາດຫຼ້າ ນາງເກີດໃນງາ ໃຫ້ເຈົ້າເມືອທຽມຂ້າງ ພະຍາແຖນຄົບແທນແທ່ . . . ນາງງາ ນອນຫຼັບຢູ່ ສະດຸ້ງຕື່ນຮ້ອງໄຫ້ເຫຼີໄຫຼ ທັງຄົງກໍ່ຮ້ອນຮຸ່ມໆ ຂຶ້ນ.





ທ້າວກ່ຳພ້າຄະລາດລຸກ ໂຊມອຸ້ມເອົາເມຍທັງຮ້ອງບຸກ ແຕ່ນົກບ່າງ ກໍຮ້ອງກູກເອົາຂວັນນາງງາ ຂຶ້ນເມືອເມືອງຟ້າ ດັງວິ່ວອນ ມາອີກວ່າ: ໃຫ້ເຈົ້າເມືອກິນເຂົ້າແຊບອ່ອນເມືອງແຖນ, ເມືອຖືແຫວນເງິນແຫວນຄຳຢູ່ໃນເມືອງຟ້າ. . . ມາເຢີ່ນາງເອີຍ.

ນົກບ່າງຮ້ອງສຸດບົດທີສາມ ຂວັນນາງງາກໍ່ອອກ ຈາກຮ່າງລອຍຂຶ້ນສູ່ເມືອງແຖນ ປ່ອຍໃຫ້ກ່ຳພ້າຮ້ອງໄຫ້ ກອດຄາບເມຍດ້ວຍຄວາມເສຍໃຈ.





ທາງພະຍາແຖນນ້ອຍ ເມື່ອໄດ້ຂວັນນາງງາມາກໍ່ຈັດ ພິທີບາສີແຕ່ງດອງ, ຕ້ອນຮັບ, ເຊີນ ຍາດພີ່ນ້ອງມາເຕົ້າໂຮມກັນ. ອ້າຍບ່າງລິ້ວໄດ້ຮາງວັນເປັນແຜ່ນແພ ເງິນຄຳເປັນອັນມາກ ມັນກິນເຫຼົ້າເມົາອາຫານ ຈົນຄານລືເລືອເມືອບ້ານບໍ່ໄດ້ ພະຍາແຖນນ້ອຍເຫັນແນວນັ້ນຈຶ່ງຖາມໝູ່ເສນາວ່າ: ໃຜຈະອາສາເອົາບ່າງຄຳເມືອບ້ານ!

ອ້າຍຜີນ້ອຍ ຂານອາສາເຈ່ຍໂຕບ່າງ ເມືອສິ່ງບ້ານ ລະຫວ່າງທາງຜີນ້ອຍຢຸດພັກ ແລ້ວຕັດໄມ້ມາສານຂ້ອງ ບ່າງລີ້ວຖາມວ່າ: ເຮີ້ຍມຶງເຮັດຫຍັງ?

ຜີນ້ອຍຕອບວ່າ: ສານ "ຂ້າງບ່ອງ" ໃຫ້ອາດຍານັ່ງ ສະບາຍ ! ເມື່ອສານຂ້ອງແລ້ວ ຜີນ້ອຍກໍ່ຈັບບ່າງລີ້ວ ຍັດເຂົ້າຂ້ອງ ອັດຝາມັດຫວາຍຢ່າງດີແລ້ວ ລົງມາຫາ ອ້າຍກໍ່າພ້າທີ່ເມືອງຄືນ.





ຜີນ້ອຍເອົາຂ້ອງໃສ່ບ່າງໃຫ້ກ່ຳພ້າເບິ່ງແລ້ວເວົ້າວ່າ:
— ອ້າຍເອີຍ ມື້ແລງນີ້ ເຮົາມາເຮັດອ່ອມບ່າງລິ້ວກິນກັນທ້ອນ ! ບ່າງລິ້ວຊວາດຕື່ນໄດ້ຍິນຄຳເວົ້າຂອງຜີນ້ອຍ ຈຶ່ງຮ້ອງຂໍຊີວິດນຳກ່ຳພ້າ.

ກໍ່າພ້າບອກໃຫ້ມັນກູກເອີ້ນຂວັນນາງງາ ຄືນມາແຕ່ເມືອງແຖນ. ບ່າງລີ້ວຈຶ່ງຮ້ອງກູກຂຶ້ນວ່າ:

– ມາເຍີ່ນາງນາດໄທ້ ນາງເກີດໃນງາ ນາງສິດາ ນາງງາມລູກຊ້າງ ເຈົ້າຢ່າໄດ້ຢູ່ພ່າງຂ້າງ ພະຍາແຖນ ບໍ່ແມ່ນແນນເຈົ້າແຕ່ພື້ນ ນາງນາດຫຼ້າໃຫ້ເຈົ້າຕ່າວຄືນມາ... ຄືນມາເຍີ! ຜິວເກົ່າເຈົ້າອຸ້ມຢູ່ເຕັມຕັກ ຜິວເກົ່າເຈົ້າຍັງບໍ່ທັນເຊົາໃຫ້ນ້ຳຕາໄຫຼຢູ່ ຄິ່ງແຄ້ງໆ ນອນແລ້ງຢູ່ເບົ້າ ຄອງຖ້າເຈົ້າກັບມາ... ມາເຍີ່ນາງເອີຍ.





ນົກປ່າງຮ້ອງສຸດສາມບົດ ຄົງນາງງາອຸ່ນຄືນມາ ມືນ
ຕາລຸກຂຶ້ນນັ່ງ ປາກເວົ້າຈາກັບຜົວໄດ້ຄືເກົ່າ.

ອ້າຍຜີນ້ອຍຈອບອອຍບ່າງລີ້ວວ່າ: ໃສອັນລີ້ນວິເສດຂອງມຶງນັ້ນ ຂໍເບິ່ງແດ່. ບ່າງລີ້ວ ແລບລີ້ນແວ່ມອອກໃຫ້ເບິ່ງ ຜີນ້ອຍຈຶ່ງເອົາມີດສີນປາຍລີ້ນມັນຖີ້ມ. ນັບຕັ້ງແຕ່ນັ້ນມາ ນົກບ່າງລີ້ວ ຈຶ່ງບໍ່ສາມາດຮ້ອງກູກເອົາຂວັນຄົນໄດ້ ມັນໜີເຂົ້າໄປຢູ່ໃນປ່າໄກຜູ້ຄົນ. ສ່ວນສອງຜົວເມຍກ່ຳພ້າ ແລະ ນາງງາ ກໍ່ໄດ້ຢູ່ຮ່ວມກັນ ມີລູກເຕັມບ້ານຫຼານເຕັມເມືອງ ສືບຕໍ່ກັນມາຈົນເທົ້າເຖິງທຸກວັນນີ້ແລ!

